# ບົດສັງເຂບຄຳຮ້ອງຂໍຈົດທະບຽນປົກປ້ອງພັນພືດໃໝ່
# ປະເພດຕົ້ນມອນ (Mulberry Oumhuck Pk)

- ເລກທີຄຳຮ້ອງ ແລະ ວັນທີຍື່ນຄຳຮ້ອງ: ເລທີ 01, ວັນທີ 8 ກັນຍາ 2020
- ຊື່ ແລະ ທີ່ຢູ່ ຂອງນັກປະສົມພັນພືດ: ທ້າວ ແກ່ນຈັນ ສົມມາວົງ ບ້ານມະໂນ, ນະຄອນຫຼວງພະບາງ ແຂວງຫຼວງພະບາງ.
- ຊື່ ແລະ ທີ່ຢູ່ ຂອງນັກປະສົມພັນພືດ: ທ້າວ ແກ່ນຈັນ ສົມມາວົງ ບ້ານມະໂນ, ນະຄອນຫຼວງພະບາງ ແຂວງຫຼວງພະບາງ.
- ຊື່ພັນພືດໃໝ່: ມອນອຸ້ມຮັກ (KP Ounhuck KP1)

**1. ຄວາມໃໝ່.**

ເປັນພັນພືດທີ່ຜ່ານຂະບວນການປັບປຸງເປັນພັນພືດໃໝ່ ເປັນການປະສົມດ້ວຍເກສອນ ລະຫວ່າງ ມອນພັນພື້ນເມືອງລາວມອນແກ້ວໃບມົນທີ່ເກີດຂື້ນຕາມແຄມແມ່ນ້ຳຄານຫຼວງພະບາງ ກຳນົດເອົາສະປໍໂຕແມ່ ແລະ ມອນສາຍພັນອິດສະລະເອວໄດ້ກຳນົດເອົາເປັນສະປໍໂຕຜູ້ ແລ້ວມາປະສົມພັນກັນຈະໄດ້ເມັດ ຫຼື ແກ່ນມອນໃໝ່ເພື່ອມາເພາະກ້າເປັນເບ້ຍມອນນ້ອຍໃໝ່.

**2. ຄວາມແຕກຕ່າງ**

ຫຼັງຈາກເພາະກ້າແລ້ວ ມາອະນຸບານ ແລະ ລົງປູກຈະສັງເກດເຫັນຄວາມແຕກຕ່າງຈາກພໍ່ແມ່ພັນຕາມຕາຕະລາງລຸ່ມນີ້:

| ລາຍການ | ລຳຕົ້ນ | ຂໍ້ຕາ | ໃບມອນ | ໝາກ | ລະດູການ |
|---|---|---|---|---|---|
| ພໍ່ພັນ(ມອນອິດສາລະເອວ) | ເຕັ້ຍ | ປານກາງ<br>4-8 Cm | ໜາ, ເຫຼື້ອມ ຂອບໃບແຂ້ວເລື່ອຍໃຫຍ່ໜາ | ໃຫຍ່ຍາວ<br>4-6 Cm | 1 ປີມີ 3 ລະດູ |
| ແມ່ພັນມອນ (ມອນພັນພື້ນເມືອງລາວ ຫຼວງພະບາງ) | ໃຫຍ່ສູງ | ຫ່າງຍາວ<br>8-12 Cm | ບາງອ່ອນສີດ້ານຂອບໃບແຂ້ວເລື່ອຍນ້ອຍແຫລວ | ນ້ອຍສັ້ນ<br>1-2 Cm | 1 ປີມີ 1 ລະດູ |
| ພັນພືດໃໝ່ | ເຕັ້ຍເຄື່ອຍາວ | ຖີ່<br>4-7 Cm | ປານກາງ ສີເຄິ່ງກ້ານເຫຼື້ອມ ຂອບໃບແຂ້ວຖີ່ ແຫຼມ | ປານການ 2-5 Cm | 1 ປີ 4 ລະດູ |

**3. ຄວາມຄົງຕົວ**

ຈະສັງເກດເຫັນໄດ້ວ່າຈາກລຸ້ນທີ່ 1 ແມ່ນເພາະກ້າດ້ວຍແກ່ນ ແລະ ລຸ້ນທີ່ 2 ແມ່ນການປັກຊຳດ້ວຍກິ່ງງ່າ ແລ້ວມາສົມທຽບຕາຕະລາງຄ່າບັນທຶກລຸ້ນທີ 1 ເຫັນໄດ້ວ່າຄ່າຍັງຄືເກົ່າແບບເດີມບໍ່ມີການປ່ຽນແປງ.

**4. ຄວາມສະໝ່ຳສະເໝີ.**

ແມ່ນເອົາລຸ້ນທີ 2 ໄປປູກດ້ວຍກິ່ງງ່າ ແລະ ປ່ຽນສະຖານທີ່ປູກແລ້ວ ເອົາຜົນຂອງລຸນທີ 3ນີ້ມາສົມທຽບກັບລຸ້ນທີ 1 ຈະສັງເກດໄດ້ວ່າຄ່າຍງແບບເດີມບໍ່ມີການປ່ຽນແປງ.